ສາທາລະນະລັດປະຊາທິປະໄຕປະຊາຊົນລາວ

ສັນຕິພາບເອກະລາດປະຊາທິປະໄຕເອກະພາບວັດທະນະຖາວອນ

................................

ເຈົ້າແຂວງ

ເລກທີ...1274../ຈຂ.ບກ

ບໍ່ແກ້ວ, ລົງວັນທີ.4..[illegible]..2016

# ຄຳສັ່ງ

## ວ່າດ້ວຍ ການປົກປັກຮັກສາທີ່ດິນກະສິກຳ ແລະ ຄຸ້ມຄອງການ ຫັນປ່ຽນທີ່ດິນກະສິກຳ ຕາມກົດໝາຍ, ຕາມທິດຍືນຍົງ ແລະ ໄປຕາມທ່າແຮງຂອງທ້ອງຖິ່ນ

- ອີງຕາມ ກົດໝາຍກະສິກຳ ແລະ ປ່າໄມ້ ເລກທີ 01 / ສພຊ ລົງວັນທີ 10 ຕຸລາ 1998. ພາກທີ I ແລະ ພາກ IV
- ອີງຕາມ ກົດໝາຍທີ່ດິນເລກທີ 04/ສພຊ,ລົງວັນທີ 21 ຕຸລາ 2003 ສະບັບປັບປຸງໃໝ່, ໝວດທີ 2 ວ່າດ້ວຍການຄຸ້ມຄອງທີ່ດິນກະສິກຳ.
- ອີງຕາມ ລັດຖະບັນຍັດເລກທີ 003 / ປປທ, ລົງວັນທີ 26 ທັນວາ 2012 ວ່າດ້ວຍ ຄ່າທຳນຽມການຫັນປ່ຽນທີ່ດິນກະສິກຳ.
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ເລກທີ 0719 , ລົງວັນທີ 15 ມີນາ 2013 ວ່າດ້ວຍສ້າງຕັ້ງຂະແໜງວິຊາການຂອງພະແນກກະສິກຳ-ປ່າໄມ້ເພື່ອຈັດຕັ້ງ ແລະ ເຄື່ອນໄຫວສະເພາະວຽກຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ.
- ອີງຕາມ ແຜນຍຸດທະສາດຄ້ຳປະກັນສະບຽງອາຫານ ແລະ ຜະລິດເປັນສິນຄ້າຂອງຂະແໜງກະສິກຳ ແລະ ປ່າໄມ້ ຮອດ ປີ 2025 ແລະ ວິໄສທັດຮອດປີ 2030.
- ອີງຕາມ ກົດໝາຍວ່າດ້ວຍ ການປົກຄອງທ້ອງຖິ່ນ ເລກທີ 68 /ສພຊ , ລົງວັນທີ 14 ທັນວາ 2015.

ເພື່ອຈັດຕັ້ງປະຕິບັດຕາມມະຕິຕົກລົງຂອງລັດຖະບານທີ່ໄດ້ເລືອກເອົາ 10 ແຂວງໃນທົ່ວປະເທດ ເປັນແຂວງຈຸດສຸມໃນການຜະລິດກະສິກຳ ໃນນີ້ແຂວງບໍ່ແກ້ວກໍ່ແມ່ນ 1 ໃນ 10 ແຂວງຈຸດສຸມໃນການຜະລິດກະສິກຳ ເພື່ອຄ້ຳປະກັນສະບຽງອາຫານ ແລະ ສົ່ງເສີມການຜະລິດເປັນສິນຄ້າ ໂດຍມີການລິເລີ່ມຈາກເຂດໂຄງການຊົນລະປະທານທີ່ມີທ່າແຮງ, ມີເງື່ອນໄຂທີ່ເໝາະສົມ ເພື່ອພັດທະນາຊົນລະກະເສດທີ່ມີລັກສະນະຄົບຊຸດ, ຮັບປະກັນການຍົກສູງປະສິດທິຜົນ ແລະ ມີຄວາມຍືນຍົງ ສະເພາະຍຸດທະສາດຮອດປີ 2025 ຂອງແຂວງບໍ່ແກ້ວ ແມ່ນສູ້ຊົນຜະລິດເຂົ້າເປືອກລວມໃຫ້ໄດ້ປະມານ 114.840 ( ໜຶ່ງແສນ ສິບສີ່ພັນ ແປດຮ້ອຍ ສີ່ສິບ ) ໂຕ່ນ ໃນປີ 2020 ໂດຍສຸມໃສ່ຜະລິດຢູ່ 3 ( ສາມ ) ທົ່ງພຽງໃຫຍ່ຂອງແຂວງຄື ທົ່ງງິ້ວແດງ ເມືອງຕົ້ນເຜິ້ງ , ທົ່ງພ້າວທ້າວ ເມືອງ ຫ້ວຍຊາຍ ແລະ ທົ່ງຜາອຸດົມ ເມືອງຜາອຸດົມ ນອກຈາກນີ້ຍັງສົ່ງເສີມການນຳໃຊ້ທີ່ດິນກະສິກຳຢູ່ເຂດລຽບຕາມຮ່ອມພູຂອງບັນດາເມືອງ, ສະນັ້ນ ເພື່ອຮັບປະກັນການຜະລິດສະບຽງອາຫານ ແລະ ພືດເປັນສິນຄ້າໃຫ້ໄດ້ຕາມຄວາມຕ້ອງການດັ່ງກ່າວ ຈຶ່ງມີຄວາມຈຳເປັນຕ້ອງມີການຄຸ້ມຄອງ, ການປົກປັກຮັກສາ ແລະ ພັດທະນາທີ່ດິນກະສິກຳ ຂອງແຂວງບໍ່ແກ້ວ ໃນເນື້ອທີ່ 53.989 ( ຫ້າສິບສາມພັນ ເກົ້າຮ້ອຍ ແປດສິບ ເກົ້າ ) ເຮັກຕາ ໂດຍໄດ້ກຳນົດ 11 (ສິບເອັດ) ແຜນງານ ແລະ 147 ( ໜຶ່ງຮ້ອຍສີ່ສິບເຈັດ ) ໂຄງການ ຮັບຮອງບັນຈຸເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຂອງແຂວງບໍ່ແກ້ວ ແຕ່ປີ 2016-2020 ເພື່ອເປົ້າໝາຍທີ່ມີຄວາມໝັ້ນຄົງດ້ານສະບຽງອາຫານໃນໄລຍະຍາວ ແລະ ທັງເປັນການສ້າງແຫຼ່ງລາຍໄດ້ເພີ່ມໃຫ້ປະຊາຊົນຜູ່ທຸກຍາກໄດ້ມີຊີວິດການເປັນຢູ່ທີ່ດີຂຶ້ນ.

**ເຈົ້າແຂວງງບໍ່ແກ້ວອອກຄຳສັ່ງ :**

1. ມອບໃຫ້ພະແນກກະສິກຳ ແລະ ປ່າໄມ້ແຂວງ ຊີ້ນຳ ຂະແໜງຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ ໂດຍປະສານສົມທົບກັບ ຂະແໜງການທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດຕາມກົດໝາຍ, ດຳລັດ ແລະ ນິຕິກຳຕ່າງໆ ທີ່ຂັ້ນເທິງວາງອອກເພື່ອປົກປັກຮັກສາຄຸ້ມຄອງການຫັນປ່ຽນທີ່ດິນກະສິກຳໃຫ້ຖືກຕ້ອງສອດຄ່ອງຕາມລະບຽບກົດໝາຍ ແລະ ພັດທະນາໄປຕາມທ່າແຮງຂອງທ້ອງຖິ່ນ ຕະຫລອດຮອດດຳເນີນການສຳຫຼວດ/ຈັດສັນ ແລະ ແບ່ງເຂດນຳໃຊ້ທີ່ດິນກະສິກຳຕາມທິດຍືນຍົງ ແລະ ໄປຕາມທ່າແຮງຂອງທ້ອງຖິ່ນ.

2. ພົນລະເມືອງລາວ ທີ່ມີອາຊີບເປັນຊາວກະສິກອນ ຕ້ອງໄດ້ຈົດທະບຽນ ແລະ ຂຶ້ນສຳມະໂນດິນກະສິກຳເປັນຂອງຕົນເອງເພື່ອຢັ້ງຢືນການນຳໃຊ້, ການປົກປັກຮັກສາ ແລະ ພັດທະນາທີ່ດິນກະສິກຳ ຢ່າງຖືກຕ້ອງຕາມລະບຽບກົດໝາຍ, ບຸກຄົນທີ່ມີປຶ້ມສຳມະໂນທີ່ດິນກະສິກຳເທົ່ານັ້ນ ຈື່ງຈະມີເງື່ອນໄຂໄດ້ຮັບການອອກໃບຢັ້ງຢືນການນຳໃຊ້ທີ່ດິນກະສິກຳ ແລະ ໃບຢັ້ງຢືນການພັດທະນາທີ່ດິນກະສິກຳຈາກຂະແໜງກະສິກຳ ແລະ ປ່າໄມ້.

3. ຕໍ່ບຸກຄົນທີ່ມີປຶ້ມສຳມະໂນທີ່ດິນກະສິກຳ ມີໃບຢັ້ງຢືນການນຳໃຊ້ທີ່ດິນກະສິກຳ ແລະ ມີໃບຢັ້ງຢືນການພັດທະນາທີ່ດິນກະສິກຳຖືກຕ້ອງເທົ່ານັ້ນ ຈື່ງຈະມີສິດສະເໜີ ຂໍຂຶ້ນທະບຽນ ແລະ ອະນຸຍາດໃຫ້ອອກໃບຕາດິນຂອບທອງນຳຂະແໜງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມໄດ້, ລັດບໍ່ຮັບຮູ້ການຊື້-ຂາຍ, ການຈັບຈອງ, ການຍຶດ, ການມອບໂອນທີ່ດິນກະສິກຳ ແລະການສືບທອດທີ່ດິນກະສິກຳຂອງສ່ວນບຸກຄົນ ຫຼື ຂອງສາທາລະນະໂດຍບໍ່ຖືກຕ້ອງຕາມລະບຽບກົດໝາຍ.

4. ເພື່ອຄຸ້ມຄອງ-ປົກປັກຮັກສາ ແລະ ພັດທະນາທີ່ດິນກະສິກຳຕາມເປົ້າໝາຍ ໄປຕາມທິດຍືນຍົງ ໃຫ້ໄດ້ຮັບຜົນດີຕ້ອງມີການທົບທວນບົດວິພາກເສດຖະກິດ, ປະເມີນຜົນກະທົບທີ່ອາດຈະເກີດຂຶ້ນຈາກການສະເໜີລົງທຶນ, ເຊົ່າ ຫຼື ສຳປະທານທີ່ດິນກະສິກຳ ກ່ອນການນຳສະເໜີຂັ້ນເທິງພິຈາລະນາອະນຸມັດ ຈະຕ້ອງມີການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃຫ້ມີຄວາມເປັນເອກະພາບກັນກ່ອນ, ພາຍຫຼັງໄດ້ຮັບການອະນຸມັດຈາກຂັ້ນເທິງແລ້ວ ຕ້ອງມີການລົງຕິດຕາມກວດກາການນຳໃຊ້ທີ່ດິນກະສິກຳ ຂອງນັກລົງທຶນ, ຜູ້ປະກອບການໃຫ້ຖືກຕ້ອງຕາມສັນຍາ ແລະ ລະບຽບກົດໝາຍ.

5. ຕໍ່ການນຳໃຊ້ຝຸ່ນເຄມີລົງໃນທີ່ດິນກະສິກຳຕ້ອງຮັບປະກັນບໍ່ໃຫ້ສົ່ງຜົນກະທົບຕໍ່ສະພາບແວດລ້ອມ ແລະ ຄວາມອຸດົມສົມບູນຂອງດິນກະສິກຳ ຖ້າມີການນຳໃຊ້ຝຸ່ນເຄມີທີ່ເກີນຂະໜາດ ເປັນສາເຫດເຮັດໃຫ້ດິນກະສິກຳກາຍເປັນດິນເຄັມ, ດິນສົ້ມ ນັ້ນກໍ່ຖືວ່າມີການທຳລາຍດິນກະສິກຳໂດຍກົງ ຊຶ່ງຈະສ້າງຜົນກະທົບຕໍ່ເສດຖະກິດ - ສັງຄົມ ກໍ່ຄືຈະເຮັດໃຫ້ການຜະລິດສະບຽງອາຫານບໍ່ມີຄວາມໝັ້ນຄົງ ດັ່ງນັ້ນຄວນມີການນຳໃຊ້ຝຸ່ນເຄມີໃນອັດຕາທີ່ເໝາະສົມ ແລະ ໃຊ້ຄຽງຄູ່ກັບຝຸ່ນຊີວະພາບໄປພ້ອມໆກັນ

6. ສຳຫລັບຜູ້ຜະລິດ ຫຼື ຜູ້ນຳເຂົ້າຝຸ່ນເຄມີເພື່ອຈຳໜ່າຍ ຕ້ອງໄດ້ຜ່ານການວິໄຈ ແລະ ກວດສອບຝຸ່ນເພື່ອຢັ້ງຢືນຄຸນນະພາບຝຸ່ນນຳກົມຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ ເມື່ອຜ່ານການຢັ້ງຢືນຄຸນນະພາບຝຸ່ນໃຫ້ໄດ້ຕາມມາດຕະຖານຈາກນັ້ນຈື່ງໄປຈົດທະບຽນສູດຝຸ່ນນຳກົມປູກຝັງ ກະຊວງກະສິກຳ ແລະ ປ່າໄມ້ ໃຫ້ຖືກຕ້ອງກ່ອນ ຈື່ງສາມາດນຳເຂົ້າມາຈຳໜ່າຍໃຫ້ຊາວກະສິກອນ ຫຼື ຜູ້ປະກອບການທຸລະກິດກະສິກຳເອົາໄປນຳໃຊ້.

7. ສຳລັບຄ່າທຳນຽມຕາມລັດຖະບັນຍັດຂອງປະທານປະເທດ ເລກທີ 003 / ປປທ, ລົງວັນທີ 26 ທັນວາ 2012 ໝວດທີ VIII ແລະ XIII ແມ່ນໄດ້ລະບຸໄວ້ດັ່ງລຸ່ມນີ້ :

**7.1 ຕາຕະລາງ 01 : ວ່າດ້ວຍ ຄ່າທຳນຽມອອກໃບຢັ້ງຢືນການນຳໃຊ້ ແລະ ໃບຢັ້ງຢືນການພັດທະນາທີ່ດິນກະສິກຳ**

| ລ/ດ | ເນື້ອໃນເອກະສານ | ກີບ/ໃບ |
|---|---|---|
| 1 | ການອອກປຶ້ມສຳມະໂນທີ່ດິນກະສິກຳ | ບໍ່ເສຍຄ່າ |
| 2 | ການອອກໃບຢັ້ງຢືນການນຳໃຊ້ທີ່ດິນກະສິກຳ | 100.000 ກີບຕໍ່ໃບ |
| 3 | ການອອກໃບຢັ້ງຢືນການພັດທະນາທີ່ດິນກະສິກຳ | 50.000 ກີບຕໍ່ໃບ |

7.2 ຕາຕະລາງ 02 : ວ່າດ້ວຍ ຄ່າທຳນຽມການຫັນປ່ຽນທີ່ດິນກະສິກຳຈາກປະເພດໜຶ່ງໄປເປັນອີກປະເພດໜຶ່ງ

:

| ລ/ດ | ເປົ້າໝາຍການຫັນປ່ຽນປະເພດທີ່ດິນກະສິກຳ | ອັດຕາຄ່າທຳນຽມການຫັນປ່ຽນທີ່ດິນ/ຕາແມັດ/ກີບ | | |
|---|---|---|---|---|
| | | ເຂດຕົວເມືອງ | ເຂດຊານເມືອງ | ເຂດຊົນນະບົດ |
| 1. | ການຫັນປ່ຽນທີ່ດິນກະສິກຳມາເປັນດິນປຸກສ້າງເພື່ອເປົ້າໝາຍທາງການຄ້າ | 2.000 | 1.000 | 500 |
| 2 | ການຫັນປ່ຽນທີ່ດິນກະສິກຳມາເປັນດິນປຸກສ້າງເພື່ອເປັນບ່ອນທີ່ຢູ່ອາໃສສຳລັບຄອບຄົວ( ຍົກເວັ້ນດິນນາ) | 100 | 50 | 30 |
| 3 | ການຫັນປ່ຽນທີ່ດິນປຸກສ້າງມາເປັນທີ່ດິນກະສິກຳ | 5 | 3 | 2 |

8. ມາດຕະການຈັດຕັ້ງປະຕິບັດ ແລະ ມາດຕະການຕໍ່ຜູ້ລະເມີດ :

8.1 ຫ້າມບໍ່ໃຫ້ບຸກຄົນໃດໜຶ່ງ ທຳການຫັນປ່ຽນເນື້ອທີ່ດິນກະສິກຳໄປເປັນດິນປະເພດອື່ນໂດຍສະເພາະແມ່ນດິນປູກຝັງ, ລ້ຽງສັດ, ດິນເຂດສູນຫຼືສະຖານີກະສິກຳ ລວມທັງດິນເຂດຊົນລະປະທານຕ່າງໆ ແມ່ນບໍ່ອະນຸຍາດໃຫ້ຖົມ ແລະ ຂຸດຄົ້ນເອົາດິນກະສິກຳດ້ວຍຮູບການ ແລະ ວິທີການໃດກໍ່ຕາມທີ່ຈະເຮັດໃຫ້ດິນກະສິກຳປ່ຽນແປງຈາກສະພາບເດີມ, ຖ້າບຸກຄົນໃດມີຄວາມຈຳເປັນ ຈະທຳການຫັນປ່ຽນການນຳໃຊ້ທີ່ດິນກະສິ ກຳ ບົນພື້ນຖານມີການນຳໃຊ້ທີ່ມີຄວາມຍືນຍົງ ໄປຕາມທ່າແຮງຂອງທ້ອງຖິ່ນ ຫຼື ຜູ່ກ່ຽວມີເງື່ອນໄຂບຸກເບີກເນື້ອທີ່ດິນກະສິກຳບ່ອນໃໝ່ປ່ຽນແທນ ທາງຂະແໜງການວິຊາການຂອງພະແນກກະສິກຳ ແລະ ປ່າໄມ້ຈະຄົ້ນ ຄວ້າ, ພິຈາລະນາຕາມລະບຽບກົດໝາຍ (ສຳລັບດິນນາເຂດຊົນລະປະທານທີ່ມີນ້ຳສະດວກແມ່ນຫ້າມເດັດຂາດບໍ່ໃຫ້ມີການຫັນປ່ຽນຈາກການເຮັດນາໄປເຮັດອັນອື່ນ) ແລະ ບໍ່ອະນຸຍາດໃຫ້ອົງການ ຂະແໜງການທີ່ກ່ຽວຂ້ອງອອກໃບຕາດິນຂອບທອງຢູ່ເຂດດັ່ງກ່າວ ກ່ອນໄດ້ຮັບຄຳເຫັນຕົກລົງຂອງເຈົ້າແຂວງງບໍ່ແກ້ວ ສຳລັບເນື້ອທີ່ນາທີ່ໄດ້ອອກໃບຕາດິນຂອບທອງແລ້ວນັ້ນ ແມ່ນຕ້ອງໄດ້ເຮັດບົດບັນທຶກກັບເຈົ້າຂອງກຳມະສິດທີ່ດິນດັ່ງກ່າວເພື່ອຫລີກລ່ຽງການນຳໃຊ້ທີ່ດິນນາຜິດເປົ້າໝາຍ.

8.2 ຕໍ່ຜູ່ທີ່ໄດ້ກະທຳການຫັນປ່ຽນດິນກະສິກຳໂດຍທີ່ບໍ່ໄດ້ຮັບອານຸຍາດກ່ອນໜ້ານີ້ ແມ່ນຕ້ອງໄດ້ເສຍຄ່າທຳນຽມຕາມລັດຖະບັນຍັດ ເລກທີ 003 / ປປທ ລົງວັນທີ 26 ທັນວາ 2012 ເມື່ອມີການເຜີຍແຜ່ຄຳສັ່ງສະບັບນີ້ສຳເລັດແລ້ວຫາກບຸກຄົນໃດຍັງມີການຝ່າຝືນ ຫຼື ລະເມີດແມ່ນຈະຖືກປັບໄໝ່ຄູນ 2 (ສອງ) ຂອງຄ່າທຳນຽມຕາມກົດໝາຍທີ່ລະບຸໄວ້ໃນຕາຕະລາງ ຂໍ້ທີ 7.1 ແລະ ທີ 7.2 ຫຼື ທັງປັບໃໝ ແລະ ພ້ອມທັງດຳເນີນຄະດີຕາມລະບຽບກົດໝາຍ.

8.3ຕໍ່ຜູ່ທີ່ລະເມີດກ່ຽວກັບຝຸ່ນ, ປຸ່ຍເຄມີຕ່າງໆ ຖ້າໄດ້ຮັບການລາຍງານ ຈາກເຈົ້າໜ້າທີ່, ພະນັກງານໄດ້ກວດກາພົບເຫັນວ່າມີການລັກລອບນຳເຂົ້າຝຸ່ນ ແລະ ມີການນຳໃຊ້ຝຸ່ນເກີນຂະໜາດ ຊຶ່ງມີຜົນຕໍ່ການທຳລາຍທີ່ດິນກະສິກຳ, ທຳລາຍສິ່ງແວດລ້ອມ ຫຼື ຈຳໜ່າຍຝຸ່ນທີ່ບໍ່ມີຄຸນນະພາບ ແມ່ນຈະຖືກປັບໃໝ 500.000 - 1.000.000 (ຫ້າແສນ ຫາ ໜຶ່ງລ້ານ ) ກີບຕໍ່ຄັ້ງ ແລະ ພ້ອມດຳເນີນຄະດີຕາມກົດໝາຍ.

8.4ຕໍ່ພະນັກງານລັດຖະກອນ, ທະຫານ, ຕຳຫຼວດ, ບຸກຄົນ, ນິຕິບຸກຄົນ ນັກລົງທຶນ ແລະ ຜູ່ປະກອບການທຸລະກິດ ທັງພາຍໃນ ແລະ ຕ່າງປະເທດ ຫາກມີການລັກລອບທຳການສຳຫຼວດ-ວັດແທກ ແລະ ຫັນປ່ຽນທີ່ດິນກະສິກຳ ລວມທັງມີການອຳນວຍຄວາມສະດວກດ້ານເອກະສານຕ່າງໆ ຫຼື ໄປໂຄສະນາ, ປຸກລະດົມປະຊາຊົນ ເຮັດໂດຍພະລະການ, ບໍ່ໄດ້ມາພົວພັນ ກັບ ພະແນກກະສິກຳ ແລະ ປ່າໄມ້ແຂວງ ໃນເບື້ອງຕົ້ນ ຫຼື ກັບຂະແໜງຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ, ຂະແໜງການທີ່ກ່ຽວຂ້ອງ ຖືວ່າເປັນການຝ່າຝືນ, ລະເມີດ ຂໍ້ທີ 3 , 8.1 , 8.2, 8.3 ແລະ ຂໍ້ທີ 8.4 ຂ້າງເທິງນັ້ນ ສະແດງວ່າຜູ່ກ່ຽວໄດ້ກະທຳຜິດຕໍ່ລະບຽບກົດໝາຍ ຊຶ່ງຈະຖືກຍຸບເລີກຂັ້ນຕອນດຳເນີນການຜ່ານມາທັງໝົດ ອາດຈະຖືກຖອນໃບດຳເນີນທຸລະກິດ ຫຼື ຖືກປັບໄໝ່ ແລະ ດຳເນີນຄະດີຕາມລະບຽບກົດໝາຍໄປພ້ອມກັນ.

8.5 ມອບໃຫ້ພະແນກກະສິກຳ ແລະ ປ່າໄມ້ ແຂວງ ສົມທົບ ກັບ ພະແນກຊັບພະຍາກອນທຳມະຊາດ - ສິ່ງແວດລ້ອມແຂວງ ແລະ ບັນດາທ່ານເຈົ້າເມືອງທັງ 5 ເມືອງ ຊີ້ນຳຂະແໜງການທີ່ກ່ຽວຂ້ອງໃນການຈັດຕັ້ງປະຕິບັດຄຳສັ່ງສະບັບນີ້ຢ່າງເຂັ້ມງວດ, ພ້ອມທັງເປັນເຈົ້າການຈັດຕັ້ງປະຕິບັດ ແລະ ຜັນຂະຫຍາຍເປັນອັນລະອຽດລົງສູ່ທຸກຂົງເຂດທີ່ກ່ຽວຂ້ອງຢ່າງທົ່ວເຖິງໃຫ້ໄດ້ຮັບຜົນດີ, ຜ່ານການຈັດຕັ້ງປະຕິບັດຕົວຈິງ ມີຂໍ້ສະດວກ ແລະ ຂໍ້ຫຍຸ້ງຍາກແນວໃດໃຫ້ຮີບຮ້ອນລາຍງານຂັ້ນເທິງ ເພື່ອຮັບຊາບ ແລະ ແກ້ໄຂໃຫ້ທັນການ.

9. ຄຳສັ່ງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນ ແລະ ພາຍຫຼັງທີ່ພິມລົງໃນຈົດໝາຍເຫດທາງລັດຖະການ 15 ວັນ ( ສິບຫ້າ) ເປັນຕົ້ນໄປ , ຄຳສັ່ງໃດທີ່ຂັດກັບຄຳສັ່ງສະບັບນີ້ລ້ວນແຕ່ຖືກຍົກເລີກ

ເຈົ້າແຂວງບໍ່ແກ້ວ

ແຂວງ ບໍ່ແກ້ວ — ເຈົ້າແຂວງ

ຄຳກິ່ງ ເອືອຍມະນີຣັກ

- ບ່ອນສົ່ງ ແລະ ສຳເນົາ :

| | | |
|---|---|---|
| 1) | ຫ້ອງວ່າການປົກຄອງແຂວງ + ເມືອງ | 6 ຊຸດ |
| 2) | ກະສິກຳ ແລະ ປ່າໄມ້ ແຂວງ + ເມືອງ | 6 ຊຸດ |
| 3) | ຊັບພະຍາກອນທຳມະຊາດ -ສິ່ງແວດລ້ອມ ແຂວງ + ເມືອງ | 6 ຊຸດ |
| 4) | ຂະແໜງແຜນການ-ການລົງທຶນ ແຂວງ + ເມືອງ | 6 ຊຸດ |
| 5) | ພະແນກອຸດສາຫະກຳ-ການຄ້າ ແຂວງ + ເມືອງ | 6 ຊຸດ |
| 6) | ພະແນກໂຍທາທິການ (ຂະແໜງເຄຫາ-ຜັງເມືອງ) ແຂວງ + ເມືອງ | 6 ຊຸດ |